ຂ່າວ news
BOL.ODX
ສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງ ອຸດົມໄຊ
Tel: 081 260009; 212549. Fax: 081 212551
Website: www.bol.gov.la/Oudomxay/

## ກອງປະຊຸມເຜີຍແຜ່ກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ຢູ່ ແຂວງຫຼວງນໍ້າທາ



ໃນລະຫວ່າງວັນທີ 12-15 ມິຖຸນາ 2023 ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ໄດ້ຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022 ຢູ່ ເມືອງລອງ, ເມືອງສິງ ແລະ ເມືອງຫຼວງນໍ້າທາ ແຂວງຫຼວງນໍ້າທາ, ນຳພາໂດຍ **ທ່ານ ເສີມທະວີ ສີຫາຟົນ** ວ່າການຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ພ້ອມດ້ວຍຄະນະ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຫຼາຍກວ່າ 100 ທ່ານ ທີ່ເປັນຕົວແທນຈາກຂະແໜງການກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ພາກທຸລະກິດ.

ຈຸດປະສົງຂອງການຈັດກອງປະຊຸມເຜີຍແຜ່ໃນຄັ້ງນີ້ ແມ່ນເພື່ອເຮັດໃຫ້ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ, ນັກທຸລະກິດ, ພໍ່ຄ້າຊາວຂາຍ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ຕໍ່ກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ໃຫ້ມີຜົນສັກສິດ ແລະ ສາມາດນຳໃຊ້ຢ່າງມີປະສິດທິພາບສູງ.

ພ້ອມນີ້, ກອງປະຊຸມຍັງໄດ້ຮັບຟັງການລາຍງານກ່ຽວກັບບາງເນື້ອໃນສຳຄັນຕົ້ນຕໍຂອງກົດໝາຍສະບັບດັ່ງກ່າວ ເປັນຕົ້ນແມ່ນຄວາມໝາຍຄວາມສຳຄັນຂອງການຄຸ້ມຄອງເງິນຕາຕ່າງປະເທດ, ການຖືຄອງເງິນຕາຕ່າງປະເທດ, ການຊຳລະກັບຕ່າງປະເທດ, ການບໍລິການເງິນຕາຕ່າງປະເທດ, ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ. ນອກນີ້, ຜູ້ເຂົ້າຮ່ວມກໍ່ໄດ້ແລກປ່ຽນທັດສະນະຕໍ່ວຽກງານຄຸ້ມຄອງເງິນຕາຕ່າງປະເທດຢູ່ທ້ອງຖິ່ນ ເຊິ່ງປະຊາຊົນສ່ວນຫຼວງຫຼາຍຍັງຖືເບົາ, ລະເມີດຕໍ່ກົດໝາຍດັ່ງກ່າວ ແລະ ຍັງເຫັນມີການແລກປ່ຽນເງິນຕາຕ່າງປະເທດແບບຊະຊາຍໃນສັງຄົມ, ການສະໜອງເງິນຕາຕ່າງປະເທດຂອງທະນາຄານທຸລະກິດຍັງບໍ່ທັນພຽງພໍ ຕໍ່ກັບຄວາມຮຽກຮ້ອງຕ້ອງການຂອງລູກຄ້າ, ການນຳເຂົ້າທຶນຂອງນັກລົງທຶນຕ່າງປະເທດທີ່ມາລົງທຶນໃນຂົງເຂດດັ່ງກ່າວສ່ວນໃຫ່ຍບໍ່ໄດ້ໂອນຜ່ານລະບົບທະນາຄານ.




ໃນກອງປະຊຸມ ທ່ານ ເສີມທະວີ ສີທາຝົນ ອຳນວຍການຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ແລະ ປະທານຮ່ວມຈາກອົງການປົກຄອງທ້ອງຖິ່ນ ຢູ່ ເມືອງລອງ, ເມືອງສິງ ແລະ ເມືອງຫຼວງນ້ຳທາ ແຂວງຫຼວງນ້ຳທາ ໄດ້ແກ້ຂໍ້ຂ້ອງໃຈໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ ແລະ ເຂົ້າໃຈ ຕໍ່ທິດທາງ ແລະ ນະໂຍບາຍລວມຂອງລັດຖະບານ ໂດຍສະເພາະໃນການຄຸ້ມຄອງມະຫາພາກທາງດ້ານການເງິນ-ເງິນຕາຂອງ ທຫລ ພ້ອມທັງຊຸກຍູ້ໃຫ້ທຸກພາກສ່ວນໃນສັງຄົມ ເປັນເຈົ້າການພ້ອມກັນຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວໃຫ້ປະກົດຜົນເປັນຈິງ ແລະ ເປັນການປະກອບສ່ວນວຽກງານລວມຂອງຊາດ ເຮັດໃຫ້ການພັດທະນາເສດຖະກິດຂອງ ສປປ ລາວ ເວົ້າລວມ, ເວົ້າສະເພາະການພັດທະນາເສດຖະກິດຂອງເມືອງດັ່ງກ່າວ ໃຫ້ນັບມື້ມີການຂະຫຍາຍຕົວ ແລະ ມີທ່າອ່ຽງດີຂຶ້ນເທື່ອລະກ້າວ.






**ພາບ-ຂ່າວໂດຍ:** ພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ.

**ກວດແກ້:** ຄະນະຂໍ້ມູນ-ຂ່າວສານ ສາຂາ ທຫລ.ອຊ.

“ເສດຖະກິດລາວຈະເຂັ້ມແຂງ ຖ້າທຸກຄົນຮ່ວມແຮງນຳໃຊ້ເງິນກີບ”